## California Attorney General's Office
## Laotian

ຊື່ຜູ້ຕິດຕໍ່: ______________________________

ເບີໂທຣະສັບ: ______________________________

ເລກໃບລາຍງານຂອງຕຳຫຼວດ / ເລກຄະດີ: ______________________________

ໝາຍເຫດ: ______________________________

### ບັດຂໍ້ມູນກົດໝາຍ Marsy ແລະແຫຼ່ງຊ່ວຍເຫຼືອ

ຣັດຖະທຳມະນູນແຫ່ງຣັຖຄາລິຟໍເນັຍ, ມາດຕາ 1, ພາກ 28(b), ໃຫ້ສິດທິບາງຢ່າງແກ່ເຫຍື່ອອາຊະຍາກັມ. ສິດທິເຫຼົ່ານັ້ນລວມມີ:

1. **ຄວາມເປັນທັມແລະຄວາມເຄົາລົບ —** ໄດ້ຮັບການປະຕິບັດ ດ້ວຍຄວາມເປັນທັມ ແລະຄວາມເຄົາລົບຕໍ່ຄວາມເປັນສ່ວນຕົວ ແລະກຽດຂອງເຂົາ ຫຼື ລາວ, ແລະເປັນອິດສະຫຼະຈາກການຖືກຈຳກັດ, ການລ່ວງເກີນ, ແລະການຂົ່ມເຫັງ ຜ່ານກະບວນການດ້ານຄວາມຍຸດຕິທັມໃນຄະດີອາຊະຍາກັມ ຫຼື ຄະດີເຍົາວະຊົນ.
2. **ການປົກປ້ອງຄຸ້ມຄອງຈາກຈຳເລີຍ —** ໄດ້ຮັບການປົກປ້ອງຢ່າງສົມເຫດຜົນຈາກຈຳເລີຍ ແລະບຸກຄົນທີ່ກະທຳການໃນນາມຂອງຈຳເລີຍ.
3. **ການພິຈາລະນາຄວາມປອດພັຍຂອງເຫຍື່ອດ້ວຍການກຳນົດເງິນປະກັນຕົວ ແລະເງື່ອນໄຂການປ່ອຍຕົວ —** ພິຈາລະນາເຖິງຄວາມປອດພັຍຂອງເຫຍື່ອ ແລະຄອບຄົວຂອງເຫຍື່ອໂດຍການກຳນົດຈຳນວນເງິນປະກັນຕົວ ແລະເງື່ອນໄຂການປ່ອຍຕົວຂອງຈຳເລີຍ.
4. **ການປ້ອງກັນການເປີດເຜີຍຂໍ້ມູນລັບ —** ເພື່ອປ້ອງກັນການເປີດເຜີຍຂໍ້ມູນລັບ ຫຼື ບັນທຶກຕ່າງໆ ຈາກຈຳເລີຍ, ທະນາຍຄວາມຂອງຈຳເລີຍ, ຫຼື ບຸກຄົນອື່ນໃດທີ່ກະທຳການໃນນາມຂອງຈຳເລີຍ, ຊຶ່ງເປັນຂໍ້ມູນທີ່ອາດຖືກນຳໃຊ້ໃນການຊອກຫາບ່ອນຢູ່ ຫຼື ລົບກວນເຫຍື່ອ ຫຼື ຄອບຄົວຂອງເຫຍື່ອ ຫຼື ເປັນຂໍ້ມູນເປີດເຜີຍການສື່ສານທີ່ເປັນຄວາມລັບໃນລະຫວ່າງການປິ່ນປົວ ຫຼື ການປິ່ນປົວດ້ານການໃຫ້ຄຳປຶກສາ, ຫຼື ບໍ່ດັ່ງນັ້ນ ເປັນຂໍ້ມູນພິເສດ ຫຼື ກົດໝາຍກຳນົດວ່າເປັນຂໍ້ມູນລັບ.
5. **ປະຕິເສດທີ່ຈະໃຫ້ສຳພາດແກ່ຝ່າຍຈຳເລີຍ —** ມີສິດປະຕິເສດຄຳຮ້ອງຂໍເອົາການສຳພາດ, ການໃຫ້ການ, ຫຼື ການຄົ້ນພົບ ຈາກຈຳເລີຍ, ທະນາຍຄວາມຂອງຈຳເລີຍ, ຫຼື ບຸກຄົນອື່ນໃດທີ່ກະທຳການໃນນາມຂອງຈຳເລີຍ, ແລະເພື່ອກຳນົດເງື່ອນໄຂ ທີ່ສົມເຫດຜົນໃນການດຳເນີນການການສຳພາດດັ່ງກ່າວໃນກໍລະນີທີ່ເຫຍື່ອຍິນຍອມ.
6. **ການປະຊຸມເລື້ອງການຟ້ອງຮ້ອງ ແລະການແຈ້ງການເລື້ອງການຈັດການກ່ອນການພິຈາລະນາຄະດີ —** ເພື່ອແຈ້ງຢ່າງສົມເຫດຜົນ ແລະເພື່ອມອບໃຫ້ໜ່ວຍງານດຳເນີນຄະດີ, ເມື່ອຮ້ອງຂໍ, ໃນເລື້ອງການຈັບກຸມຈຳເລີຍ ຖ້າຫາກຜູ້ຟ້ອງຮ້ອງຮູ້, ການຕັ້ງຂໍ້ຫາ, ການພິຈາລະນາຕັດສິນວ່າຈະຕ້ອງສົ່ງຈຳເລີຍຂ້າມແດນຫຼືບໍ່, ແລະ, ເມື່ອຮ້ອງຂໍ, ໄດ້ຮັບແຈ້ງແລະຮັບຮູ້ ກ່ຽວກັບການຈັດການກ່ອນການພິຈາລະນາຄະດີໃດໆ.
7. **ແຈ້ງການແລະການໄປປາກົດຕົວຢູ່ທີ່ການພິຈາລະນາຄະດີທີ່ເປີດເຜີຍຕໍ່ສາທາລະນະ —** ເພື່ອແຈ້ງການຢ່າງສົມເຫດຜົນກ່ຽວກັບ ການພິຈາລະນາຄະດີທີ່ເປີດເຜີຍຕໍ່ສາທາລະນະທັງໝົດ, ລວມເຖິງການພິຈາລະນາຄະດີອາຍາ, ເມື່ອມີການຮ້ອງຂໍ, ໂດຍທີ່ຈຳເລີຍ ແລະໂຈດມີສິດໄປປາກົດຕົວ ແລະກ່ຽວກັບການປ່ອຍຕົວນັກໂທດຢ່າງມີເງື່ອນໄຂ ຫຼື ການພິຈາລະນາຄະດີ ເພື່ອປ່ອຍຕົວຫຼັງຕັດສິນວ່າກະທຳຜິດອື່ນໆ, ແລະເພື່ອມາປາກົດຕົວທີ່ການພິຈາລະນາຄະດີດັ່ງກ່າວທັງໝົດ.
8. **ການມາປາກົດຕົວທີ່ການພິຈາລະນາຄະດີໃນສານ ແລະການສະແດງຄວາມຄິດເຫັນ —** ເພື່ອສະແດງຄວາມຄິດເຫັນ, ເມື່ອມີການ ຮ້ອງຂໍ, ຢູ່ທີ່ບ່ອນພິຈາລະນາຄະດີໃດໆ, ລວມເຖິງ ການພິຈາລະນາຄະດີອາຍາໃດໆ, ທີ່ກ່ຽວຂ້ອງກັບການຕັດສິນເພື່ອປ່ອຍຕົວ ຫຼັງຈາກຖືກຈັບກຸມ, ຄຳແກ້ຟ້ອງ, ການພິພາກສາ, ການຕັດສິນປ່ອຍຕົວຫຼັງການຖືກຈັບກຸມ, ຫຼື ການພິຈາລະນາຄະດີໃດໆ ທີ່ເຫຍື່ອມີສິດກ່ຽວຂ້ອງ.
9. **ການພິຈາລະນາຄະດີແບບເລັ່ງດ່ວນແລະການສະຫຼຸບຄະດີທັນທີ —** ມີສິດຕໍ່ການພິຈາລະນາຄະດີແບບເລັ່ງດ່ວນ ແລະມີການສະຫຼຸບຄະດີທັນທີແລະເດັດຂາດ ແລະການດຳເນີນຄະດີອື່ນໆ ທີ່ກ່ຽວຂ້ອງຫຼັງຈາກການພິພາກສາຄະດີແລ້ວ.
10. **ການຈັດຫາຂໍ້ມູນໃຫ້ແກ່ພະແນກທັນບົນ —** ມີສິດໃນການໃຫ້ຂໍ້ມູນແກ່ເຈົ້າໜ້າທີ່ຂອງພະແນກທັນບົນຜູ້ທີ່ດຳເນີນການສືບສວນ ກ່ອນການພິພາກສາຄະດີ ກ່ຽວກັບຜົນກະທົບຂອງການກະທຳຜິດທີ່ມີຕໍ່ເຫຍື່ອ ແລະຄອບຄົວຂອງເຫຍື່ອ ແລະການແນະນຳ ການພິພາກສາໃດໆ ກ່ອນທີ່ຈະມີການພິພາກສາລົງໂທດຈຳເລີຍ.
11. **ການຮັບເອົາລາຍງານກ່ອນການພິພາກສາຄະດີ —** ມີສິດໄດ້ຮັບ, ເມື່ອມີການຮ້ອງຂໍ, ລາຍງານກ່ອນການພິພາກສາໂທດ ເມື່ອມີໃຫ້ແກ່ຈຳເລີຍ, ຍົກເວັ້ນໃນພາກສ່ວນທີ່ກົດໝາຍກຳນົດວ່າເປັນຄວາມລັບ.
12. **ຂໍ້ມູນກ່ຽວກັບການພິສູດຄວາມຜິດ, ການຕັດສິນລົງໂທດ, ການຄຸມຂັງ, ການປ່ອຍຕົວ, ແລະການຫຼົບໜີ —** ມີສິດໄດ້ຮັບແຈ້ງ, ເມື່ອຮ້ອງຂໍ, ກ່ຽວກັບການພິສູດຄວາມຜິດ, ການຕັດສິນລົງໂທດ, ສະຖານທີ່ແລະເວລາຂອງການຄຸມຂັງ, ຫຼື ການຈັດການອື່ນໆ ຂອງຈຳເລີຍ, ວັນທີກຳນົດປ່ອຍຕົວຂອງຈຳເລີຍ, ແລະການປ່ອຍຕົວ ຫຼື ການຫຼົບໜີຂອງຈຳເລີຍຈາກການຄວບຄຸມຕົວ.
13. **ການຊົດໃຊ້ຄືນ**
    - A. ມັນແມ່ນເຈດຕະນາອັນຊັດແຈ້ງຂອງປະຊາຊົນຊາວຄາລິຟໍເນັຍວ່າ ທຸກຜູ້ຄົນທີ່ທົນທຸກທໍລະມານຈາກການສູນເສັຽ ອັນເປັນຜົນມາຈາກເຫດອາດຊະຍາກັມ ຄວນຈະມີສິດທີ່ຈະຊອກຫາ ແລະຮັກສາການຊົດໃຊ້ຄືນຈາກບຸກຄົນທີ່ກະທຳຜິດອາດຊະຍາກັມຊຶ່ງເປັນເຫດໃຫ້ເຂົາເຈົ້າຕ້ອງທໍລະມານຈາກຄວາມສູນເສັຽ.
    - B. ການຊົດໃຊ້ຄືນຄວນມາຈາກຜູ້ກະທຳຜິດທີ່ຖືກພິພາກສາລົງໂທດໃນທຸກຄະດີ, ໂດຍບໍ່ຄຳນຶງວ່າຈະມີການຕັດສິນໂທດ ຫຼື ການຊີ້ຂາດຄະດີແລ້ວ, ໃນສິ່ງທີ່ເຮັດໃຫ້ເຫຍື່ອອາດຊະຍາກັມຕ້ອງທຸກທໍລະມານຈາກຄວາມສູນເສັຽ.
    - C. ການຈ່າຍດ້ານການເງິນທັງໝົດ, ເງິນຕ່າງໆ, ແລະຊັບສິນທີ່ເກັບມາຈາກບຸກຄົນໃດໆ ທີ່ໄດ້ຖືກສັ່ງໃຫ້ຈ່າຍຊົດໃຊ້ຄືນ ຄວນຈະນຳໃຊ້ເພື່ອຈ່າຍຈຳນວນທີ່ສັ່ງໃຫ້ໃຊ້ຄືນໃຫ້ແກ່ເຫຍື່ອກ່ອນ.
14. **ການສົ່ງຊັບສິນຄືນທັນທີ —** ມີສິດທີ່ຈະໄດ້ຮັບຊັບສິນຄືນທັນທີ ເມື່ອບໍ່ຈຳເປັນຕ້ອງນຳໃຊ້ເປັນຫຼັກຖານອີກຕໍ່ໄປ.


## California Attorney General's Office
## Laotian

ຊື່ຜູ້ຕິດຕໍ່: ______________________________

ເບີໂທຣະສັບ: ______________________________

ເລກໃບລາຍງານຂອງຕຳຫຼວດ / ເລກຄະດີ: ______________________________

ໝາຍເຫດ: ______________________________

### ບັດຂໍ້ມູນກົດໝາຍ Marsy ແລະແຫຼ່ງຊ່ວຍເຫຼືອ

ຣັດຖະທຳມະນູນແຫ່ງຣັຖຄາລິຟໍເນັຍ, ມາດຕາ 1, ພາກ 28(b), ໃຫ້ສິດທິບາງຢ່າງແກ່ເຫຍື່ອອາຊະຍາກັມ. ສິດທິເຫຼົ່ານັ້ນລວມມີ:

1. **ຄວາມເປັນທັມແລະຄວາມເຄົາລົບ —** ໄດ້ຮັບການປະຕິບັດ ດ້ວຍຄວາມເປັນທັມ ແລະຄວາມເຄົາລົບຕໍ່ຄວາມເປັນສ່ວນຕົວ ແລະກຽດຂອງເຂົາ ຫຼື ລາວ, ແລະເປັນອິດສະຫຼະຈາກການຖືກຈຳກັດ, ການລ່ວງເກີນ, ແລະການຂົ່ມເຫັງ ຜ່ານກະບວນການດ້ານຄວາມຍຸດຕິທັມໃນຄະດີອາຊະຍາກັມ ຫຼື ຄະດີເຍົາວະຊົນ.
2. **ການປົກປ້ອງຄຸ້ມຄອງຈາກຈຳເລີຍ —** ໄດ້ຮັບການປົກປ້ອງຢ່າງສົມເຫດຜົນຈາກຈຳເລີຍ ແລະບຸກຄົນທີ່ກະທຳການໃນນາມຂອງຈຳເລີຍ.
3. **ການພິຈາລະນາຄວາມປອດພັຍຂອງເຫຍື່ອດ້ວຍການກຳນົດເງິນປະກັນຕົວ ແລະເງື່ອນໄຂການປ່ອຍຕົວ —** ພິຈາລະນາເຖິງຄວາມປອດພັຍຂອງເຫຍື່ອ ແລະຄອບຄົວຂອງເຫຍື່ອໂດຍການກຳນົດຈຳນວນເງິນປະກັນຕົວ ແລະເງື່ອນໄຂການປ່ອຍຕົວຂອງຈຳເລີຍ.
4. **ການປ້ອງກັນການເປີດເຜີຍຂໍ້ມູນລັບ —** ເພື່ອປ້ອງກັນການເປີດເຜີຍຂໍ້ມູນລັບ ຫຼື ບັນທຶກຕ່າງໆ ຈາກຈຳເລີຍ, ທະນາຍຄວາມຂອງຈຳເລີຍ, ຫຼື ບຸກຄົນອື່ນໃດທີ່ກະທຳການໃນນາມຂອງຈຳເລີຍ, ຊຶ່ງເປັນຂໍ້ມູນທີ່ອາດຖືກນຳໃຊ້ໃນການຊອກຫາບ່ອນຢູ່ ຫຼື ລົບກວນເຫຍື່ອ ຫຼື ຄອບຄົວຂອງເຫຍື່ອ ຫຼື ເປັນຂໍ້ມູນເປີດເຜີຍການສື່ສານທີ່ເປັນຄວາມລັບໃນລະຫວ່າງການປິ່ນປົວ ຫຼື ການປິ່ນປົວດ້ານການໃຫ້ຄຳປຶກສາ, ຫຼື ບໍ່ດັ່ງນັ້ນ ເປັນຂໍ້ມູນພິເສດ ຫຼື ກົດໝາຍກຳນົດວ່າເປັນຂໍ້ມູນລັບ.
5. **ປະຕິເສດທີ່ຈະໃຫ້ສຳພາດແກ່ຝ່າຍຈຳເລີຍ —** ມີສິດປະຕິເສດຄຳຮ້ອງຂໍເອົາການສຳພາດ, ການໃຫ້ການ, ຫຼື ການຄົ້ນພົບ ຈາກຈຳເລີຍ, ທະນາຍຄວາມຂອງຈຳເລີຍ, ຫຼື ບຸກຄົນອື່ນໃດທີ່ກະທຳການໃນນາມຂອງຈຳເລີຍ, ແລະເພື່ອກຳນົດເງື່ອນໄຂ ທີ່ສົມເຫດຜົນໃນການດຳເນີນການການສຳພາດດັ່ງກ່າວໃນກໍລະນີທີ່ເຫຍື່ອຍິນຍອມ.
6. **ການປະຊຸມເລື້ອງການຟ້ອງຮ້ອງ ແລະການແຈ້ງການເລື້ອງການຈັດການກ່ອນການພິຈາລະນາຄະດີ —** ເພື່ອແຈ້ງຢ່າງສົມເຫດຜົນ ແລະເພື່ອມອບໃຫ້ໜ່ວຍງານດຳເນີນຄະດີ, ເມື່ອຮ້ອງຂໍ, ໃນເລື້ອງການຈັບກຸມຈຳເລີຍ ຖ້າຫາກຜູ້ຟ້ອງຮ້ອງຮູ້, ການຕັ້ງຂໍ້ຫາ, ການພິຈາລະນາຕັດສິນວ່າຈະຕ້ອງສົ່ງຈຳເລີຍຂ້າມແດນຫຼືບໍ່, ແລະ, ເມື່ອຮ້ອງຂໍ, ໄດ້ຮັບແຈ້ງແລະຮັບຮູ້ ກ່ຽວກັບການຈັດການກ່ອນການພິຈາລະນາຄະດີໃດໆ.
7. **ແຈ້ງການແລະການໄປປາກົດຕົວຢູ່ທີ່ການພິຈາລະນາຄະດີທີ່ເປີດເຜີຍຕໍ່ສາທາລະນະ —** ເພື່ອແຈ້ງການຢ່າງສົມເຫດຜົນກ່ຽວກັບ ການພິຈາລະນາຄະດີທີ່ເປີດເຜີຍຕໍ່ສາທາລະນະທັງໝົດ, ລວມເຖິງການພິຈາລະນາຄະດີອາຍາ, ເມື່ອມີການຮ້ອງຂໍ, ໂດຍທີ່ຈຳເລີຍ ແລະໂຈດມີສິດໄປປາກົດຕົວ ແລະກ່ຽວກັບການປ່ອຍຕົວນັກໂທດຢ່າງມີເງື່ອນໄຂ ຫຼື ການພິຈາລະນາຄະດີ ເພື່ອປ່ອຍຕົວຫຼັງຕັດສິນວ່າກະທຳຜິດອື່ນໆ, ແລະເພື່ອມາປາກົດຕົວທີ່ການພິຈາລະນາຄະດີດັ່ງກ່າວທັງໝົດ.
8. **ການມາປາກົດຕົວທີ່ການພິຈາລະນາຄະດີໃນສານ ແລະການສະແດງຄວາມຄິດເຫັນ —** ເພື່ອສະແດງຄວາມຄິດເຫັນ, ເມື່ອມີການ ຮ້ອງຂໍ, ຢູ່ທີ່ບ່ອນພິຈາລະນາຄະດີໃດໆ, ລວມເຖິງ ການພິຈາລະນາຄະດີອາຍາໃດໆ, ທີ່ກ່ຽວຂ້ອງກັບການຕັດສິນເພື່ອປ່ອຍຕົວ ຫຼັງຈາກຖືກຈັບກຸມ, ຄຳແກ້ຟ້ອງ, ການພິພາກສາ, ການຕັດສິນປ່ອຍຕົວຫຼັງການຖືກຈັບກຸມ, ຫຼື ການພິຈາລະນາຄະດີໃດໆ ທີ່ເຫຍື່ອມີສິດກ່ຽວຂ້ອງ.
9. **ການພິຈາລະນາຄະດີແບບເລັ່ງດ່ວນແລະການສະຫຼຸບຄະດີທັນທີ —** ມີສິດຕໍ່ການພິຈາລະນາຄະດີແບບເລັ່ງດ່ວນ ແລະມີການສະຫຼຸບຄະດີທັນທີແລະເດັດຂາດ ແລະການດຳເນີນຄະດີອື່ນໆ ທີ່ກ່ຽວຂ້ອງຫຼັງຈາກການພິພາກສາຄະດີແລ້ວ.
10. **ການຈັດຫາຂໍ້ມູນໃຫ້ແກ່ພະແນກທັນບົນ —** ມີສິດໃນການໃຫ້ຂໍ້ມູນແກ່ເຈົ້າໜ້າທີ່ຂອງພະແນກທັນບົນຜູ້ທີ່ດຳເນີນການສືບສວນ ກ່ອນການພິພາກສາຄະດີ ກ່ຽວກັບຜົນກະທົບຂອງການກະທຳຜິດທີ່ມີຕໍ່ເຫຍື່ອ ແລະຄອບຄົວຂອງເຫຍື່ອ ແລະການແນະນຳ ການພິພາກສາໃດໆ ກ່ອນທີ່ຈະມີການພິພາກສາລົງໂທດຈຳເລີຍ.
11. **ການຮັບເອົາລາຍງານກ່ອນການພິພາກສາຄະດີ —** ມີສິດໄດ້ຮັບ, ເມື່ອມີການຮ້ອງຂໍ, ລາຍງານກ່ອນການພິພາກສາໂທດ ເມື່ອມີໃຫ້ແກ່ຈຳເລີຍ, ຍົກເວັ້ນໃນພາກສ່ວນທີ່ກົດໝາຍກຳນົດວ່າເປັນຄວາມລັບ.
12. **ຂໍ້ມູນກ່ຽວກັບການພິສູດຄວາມຜິດ, ການຕັດສິນລົງໂທດ, ການຄຸມຂັງ, ການປ່ອຍຕົວ, ແລະການຫຼົບໜີ —** ມີສິດໄດ້ຮັບແຈ້ງ, ເມື່ອຮ້ອງຂໍ, ກ່ຽວກັບການພິສູດຄວາມຜິດ, ການຕັດສິນລົງໂທດ, ສະຖານທີ່ແລະເວລາຂອງການຄຸມຂັງ, ຫຼື ການຈັດການອື່ນໆ ຂອງຈຳເລີຍ, ວັນທີກຳນົດປ່ອຍຕົວຂອງຈຳເລີຍ, ແລະການປ່ອຍຕົວ ຫຼື ການຫຼົບໜີຂອງຈຳເລີຍຈາກການຄວບຄຸມຕົວ.
13. **ການຊົດໃຊ້ຄືນ**
    - A. ມັນແມ່ນເຈດຕະນາອັນຊັດແຈ້ງຂອງປະຊາຊົນຊາວຄາລິຟໍເນັຍວ່າ ທຸກຜູ້ຄົນທີ່ທົນທຸກທໍລະມານຈາກການສູນເສັຽ ອັນເປັນຜົນມາຈາກເຫດອາດຊະຍາກັມ ຄວນຈະມີສິດທີ່ຈະຊອກຫາ ແລະຮັກສາການຊົດໃຊ້ຄືນຈາກບຸກຄົນທີ່ກະທຳຜິດອາດຊະຍາກັມຊຶ່ງເປັນເຫດໃຫ້ເຂົາເຈົ້າຕ້ອງທໍລະມານຈາກຄວາມສູນເສັຽ.
    - B. ການຊົດໃຊ້ຄືນຄວນມາຈາກຜູ້ກະທຳຜິດທີ່ຖືກພິພາກສາລົງໂທດໃນທຸກຄະດີ, ໂດຍບໍ່ຄຳນຶງວ່າຈະມີການຕັດສິນໂທດ ຫຼື ການຊີ້ຂາດຄະດີແລ້ວ, ໃນສິ່ງທີ່ເຮັດໃຫ້ເຫຍື່ອອາດຊະຍາກັມຕ້ອງທຸກທໍລະມານຈາກຄວາມສູນເສັຽ.
    - C. ການຈ່າຍດ້ານການເງິນທັງໝົດ, ເງິນຕ່າງໆ, ແລະຊັບສິນທີ່ເກັບມາຈາກບຸກຄົນໃດໆ ທີ່ໄດ້ຖືກສັ່ງໃຫ້ຈ່າຍຊົດໃຊ້ຄືນ ຄວນຈະນຳໃຊ້ເພື່ອຈ່າຍຈຳນວນທີ່ສັ່ງໃຫ້ໃຊ້ຄືນໃຫ້ແກ່ເຫຍື່ອກ່ອນ.
14. **ການສົ່ງຊັບສິນຄືນທັນທີ —** ມີສິດທີ່ຈະໄດ້ຮັບຊັບສິນຄືນທັນທີ ເມື່ອບໍ່ຈຳເປັນຕ້ອງນຳໃຊ້ເປັນຫຼັກຖານອີກຕໍ່ໄປ.

15. **ແຈ້ງການເລື້ອງຂັ້ນຕອນການປ່ອຍຕົວນັກໂທດແບບມີເງື່ອນໄຂ ແລະການປ່ອຍຕົວນັກໂທດແບບມີເງື່ອນໄຂ —** ມີສິດໄດ້ຮັບແຈ້ງກ່ຽວກັບຂັ້ນຕອນການປ່ອຍຕົວນັກໂທດແບບມີເງື່ອນໄຂທັງໝົດ, ມີສິດເຂົ້າຮ່ວມໃນການຂັ້ນຕອນປ່ອຍຕົວ ນັກໂທດແບບມີເງື່ອນໄຂ, ມີສິດໃຫ້ຂໍ້ມູນແກ່ໜ່ວຍງານທີ່ດູແລເລື້ອງການປ່ອຍຕົວນັກໂທດແບບມີເງື່ອນໄຂ ເພື່ອໃຫ້ພິຈາລະນາ ກ່ອນທີ່ຈະມີການປ່ອຍຕົວຜູ້ກະທຳຜິດ, ແລະມີສິດໄດ້ຮັບແຈ້ງ, ເມື່ອຮ້ອງຂໍ, ກ່ຽວກັບການປ່ອຍຕົວແບບມີເງື່ອນໄຂ ຫຼື ການປ່ອຍຕົວຜູ້ກະທຳຜິດໃນກໍລະນີອື່ນໆ.

16. **ຄວາມປອດພັຍຂອງເຫຍື່ອ ແລະສາທາລະນະ ແມ່ນປັດໃຈໃນການປ່ອຍຕົວນັກໂທດແບບມີເງື່ອນໄຂ —** ມີສິດຂໍໃຫ້ມີການ ພິຈາລະນາເຖິງຄວາມປອດພັຍຂອງເຫຍື່ອ, ຄອບຄົວຂອງເຫຍື່ອ, ແລະສາທາລະນະຊົນທົ່ວໄປກ່ອນທີ່ຈະມີການປ່ອຍຕົວນັກໂທດ ແບບມີເງື່ອນໄຂໃດໆ ຫຼື ມີການຕັດສິນປ່ອຍຕົວຫຼັງການພິພາກສາຄະດີ.

17. **ຂໍ້ມູນກ່ຽວກັບສິດທິ 16 ຂໍ້ເຫຼົ່ານີ້ —** ເພື່ອໃຫ້ຮູ້ກ່ຽວກັບສິດທິຕ່າງໆ ທີ່ລະບຸໄວ້ໃນຫຍໍ້ໜ້າ (1) ຫາ (16).

***************************************************

## ແຫຼ່ງຂໍ້ມູນຊ່ວຍເຫຼືອເພີ່ມເຕີມ

*ໄອຍະການສູງສຸດບໍ່ຮັບປະກັນ, ມີຄວາມຮັບຜິດຊອບໃດໆ ສຳລັບ, ຫຼື ດຳເນີນການຄວບຄຸມຕໍ່ຄວາມຄິດເຫັນ, ການບໍລິການ, ແລະ ຂໍ້ມູນຕ່າງໆ ຂອງໜ່ວຍງານ ແລະອົງການເຫຼົ່ານີ້.*

**Victim Compensation Board (ຄະນະກຳມະການດູແລການທົດແທນແກ່ເຫຍື່ອຜູ້ຮັບເຄາະ) —** ສາມາດຊ່ວຍເຫຼືອຜູ້ຮັບເຄາະຮ້າຍ ສຳລັບຄ່າໃຊ້ຈ່າຍໃນດ້ານ: ການປຶກສາດ້ານສຸຂະພາບຈິດ, ຄ່າງານສົບ, ການສູນເສັຽລາຍໄດ້, ຄ່າທຳຄວາມສະອາດບ່ອນເກີດເຫດອາຊະຍາກັມ, ຄ່າຍ້າຍສະຖານທີ່, ຄ່າປິ່ນປົວທົ່ວໄປແລະຄ່າປິ່ນປົວແຂ້ວ. **1-800-777-9229** *www.victims.ca.gov*

**CA Dept. of Corrections and Rehabilitation (ພະແນກແກ້ໄຂຄວາມປະພຶດແລະການຟື້ນຟູແຫ່ງຣັຖຄາລິຟໍເນັຽ), Office of Victim & Survivor Rights & Services (OVSRS) (ຫ້ອງການດູແລສິດທິແລະບໍລິການສຳລັບເຫຍື່ອແລະຜູ້ລອດຊີວິດ) —** ໃຫ້ຂໍ້ມູນກ່ຽວກັບການປ່ອຍຕົວຜູ້ກະທຳຜິດ, ການທົດແທນຄືນ, ການປ່ອຍຕົວແບບ ມີເງື່ອນໄຂ ແລະການພິຈາລະນາຄະດີເພື່ອປ່ອຍຕົວແບບມີເງື່ອນໄຂເມື່ອຜູ້ກະທຳຜິດຖືກກັກຂັງໃນຄຸກ. **1-877-256-6877** *www.cdcr.ca.gov/victim_services*

**McGeorge School of Law (ໂຮງຮຽນກົດໝາຍແມັກຈ້ອດ) —** Victims of Crime Resource Center (ສູນແຫຼ່ງຂໍ້ມູນຊ່ວຍເຫຼືອເຫຍື່ອອາດຊະຍາກັມ) — ໃຫ້ຂໍ້ມູນແຫຼ່ງຊ່ວຍເຫຼືອສຳລັບຜູ້ຮັບເຄາະຮ້າຍໂດຍແຍກຕາມເຂດພື້ນທີ່ ພ້ອມທັງໃຫ້ຂໍ້ມູນກ່ຽວກັບສິດທິຂອງຜູ້ຮັບເຄາະຮ້າຍ. **1-800-Victims (1-800-842-8467)** *www.1800victims.org*

**National Domestic Violence Hotline (ສາຍໂທຣດ່ວນບັນຫາຄວາມຮຸນແຮງໃນຄອບຄົວແຫ່ງຊາດ) — 1-800-799-7233** *www.thehotline.org*

**ຂໍ້ມູນຕິດຕໍ່ຄາວຕີ້ສຳລັບບໍລິການດ້ານການປົກປ້ອງຜູ້ໃຫຍ່ —** (ການຂົ່ມເຫັງສູງອາຍຸ) ໝາຍເລກໂທຣດ່ວນ 24 ຊົ່ວໂມງສຳລັບແຕ່ລະຄາວຕີ້ໃນຣັຖຄາລິຟໍເນັຽ. *www.cdss.ca.gov/inforesources/County-APS-Offices*

**National Child Abuse Hotline (ສາຍໂທຣດ່ວນບັນຫາການຂົ່ມເຫັງເດັກແຫ່ງຊາດ) —** ການບຳບັດຮັກສາ ແລະການປ້ອງກັນການຂົ່ມເຫັງເດັກ. **1-800-422-4453** *www.childhelp.org*

**Rape, Abuse & Incest National Network (ສາຍໂທຣດ່ວນເຄືອຂ່າຍຊ່ວຍເຫຼືອບັນຫາການຂົ່ມຂືນ, ການຂົ່ມເຫັງ ແລະການຮ່ວມເພດທີ່ຜິດສິນທຳ) — 1-800-656-4673** *www.rainn.org*

**National Human Trafficking Resource Center Hotline (ສາຍໂທຣດ່ວນສູນຊ່ວຍເຫຼືອບັນຫາການຄ້າມະນຸດແຫ່ງຊາດ) —** ສາຍໂທຣດ່ວນຕະຫຼອດ 24 ຊົ່ວໂມງ **1-888-373-7888** *www.humantraffickinghotline.org*

**The California Relay Service** (ການບໍລິການຣີເລບອກຕໍ່ໃນຄາລິຟໍເນັຽ): **ສຳລັບຜູ້ພິການດ້ານການປາກເວົ້າ, ຫູໜວກ ຫຼື ບໍ່ຄ່ອຍໄດ້ຍິນ: ໂທຣ 711. TTY/HCO/VCO ສຳລັບສຽງພາສາອັງກິດ: 1-800-735-2929 ແລະສຳລັບພາສາສະເປນ: 1-800-855-3000. ບັນທຶກສຽງໃນ TTY/VCO/HCO ເປັນພາສາອັງກິດ: 1-800-735-2922 ແລະສຳລັບພາສາສະເປນ: 1-800-855-3000. ການເວົ້າແບບຄຳຕໍ່ຄຳ – ພາສາອັງກິດ ແລະສະປນ: 1-800-854-7784.**

**ພະແນກບໍລິການຜູ້ຮັບເຄາະຮ້າຍຂອງໄອຍະການສູງສຸດ —** ໃຫ້ຂໍ້ມູນແກ່ເຫຍື່ອ/ພະຍານໃນທ້ອງຖິ່ນ, ຂໍ້ມູນຊ່ວຍເຫຼືອຕາມ ພູມີພາກ ແລະສະຖານະການອຸທອນແກ່ເຫຍື່ອອາດຊະຍາກັມ. ສຳລັບຂໍ້ມູນເພີ່ມເຕີມ, ໂທຣ **1-877-433-9069** ຫຼືເບິ່ງທີ່ເວັບໄຊ: *www.oag.ca.gov/victimservices* ສຳລັບຂໍ້ມູນກ່ຽວກັບການຄ້າມະນຸດໃນທ້ອງຖິ່ນ, ເບິ່ງທີ່ເວັບໄຊ: *www.oag.ca.gov/human-trafficking*

***************************************************

*ຄຳວ່າ 'ຜູ້ຮັບເຄາະຮ້າຍ' ຖືກນິຍາມພາຍໃຕ້ຣັຖະທຳມະນູນແຫ່ງຣັຖຄາລິຟໍເນັຽວ່າຄື "ບຸກຄົນໜຶ່ງຜູ້ທີ່ທົນທຸກທໍລະມານໂດຍກົງ ຫຼື ຖືກກະທຳອັນຕະລາຍທາງຮ່າງກາຍ, ຈິດໃຈ, ຫຼື ທາງການເງິນອັນເປັນຜົນຂອງການກະທຳ ຫຼື ຄວາມພະຍາຍາມທີ່ຈະກະທຳ ອາດຊະຍາກັມ ຫຼື ຄວາມຜິດອາຍາ. ຄຳວ່າ 'ຜູ້ຮັບເຄາະຮ້າຍ' ຍັງລວມເຖິງ ຄູ່ສົມລົດຂອງບຸກຄົນ, ພໍ່ແມ່, ເດັກ, ພີ່ນ້ອງ, ຫຼື ຜູ້ດູແລ, ແລະລວມເຖິງຕົວແທນທີ່ຖືກກົດໝາຍຂອງເຫຍື່ອອາດຊະຍາກັມຜູ້ທີ່ເສັຽຊີວິດ, ຂາດສະມັຖພາບເລັກນ້ອຍ, ຫຼື ທາງຮ່າງກາຍ ຫຼື ຈິດໃຈ. ຄຳວ່າ 'ຜູ້ຮັບເຄາະຮ້າຍ' ບໍ່ໄດ້ລວມເຖິງ ບຸກຄົນທີ່ຢູ່ໃນການຄວບຄຸມດູແລສຳລັບການກະທຳຜິດ, ຜູ້ຖືກກ່າວຫາ, ຫຼື ບຸກຄົນຜູ້ທີ່ສານພົບວ່າ ຈະບໍ່ເປັນປະໂຫຍດຕໍ່ເຫຍື່ອທີ່ເປັນເດັກທີ່ຍັງບໍ່ກະສຽນເປັນຜູ້ໃຫຍ່."*
*(ຣັດຖະທຳມະນູນແຫທ່ງຣັຖຄາລິຟຊເນັຽ I, § 28(e).)*

*ຜູ້ຮັບເຄາະຮ້າຍ, ທະນາຍທີ່ເຫຍື່ອວ່າຈ້າງ, ຕົວແທນທາງກົດໝາຍຂອງຜູ້ຮັບເຄາະຮ້າຍ, ຫຼື ທະນາຍຄວາມຝ່າຍໂຈດຕາມການຮ້ອງຂໍຂອງເຫຍື່ອ, ອາດບັງຄັບໃຊ້ສິດທິຂ້າງເທິງນີ້ໃນການດຳເນີນຄະດີໃດໆ ຫຼື ໃນສານອຸທອນໃນເຂດອຳນາດຂອງສານຕໍ່ຄະດີເນື່ອງຈາກເປັນການໃຊ້ສິດ. ສານຄວນຈະດຳເນີນການຢ່າງທັນທີຕໍ່ຄຳຮ້ອງຂໍດັ່ງກ່າວ.*
*(ຣັດຖະທຳມະນູນແຫທ່ງຣັຖຄາລິຟຊເນັຽ I, § 28(c)(1).)*

Funding is made possible through the United States Department of Justice, Victims of Crime Act, 2016-VA-GX-0057



15. **ແຈ້ງການເລື້ອງຂັ້ນຕອນການປ່ອຍຕົວນັກໂທດແບບມີເງື່ອນໄຂ ແລະການປ່ອຍຕົວນັກໂທດແບບມີເງື່ອນໄຂ —** ມີສິດໄດ້ຮັບແຈ້ງກ່ຽວກັບຂັ້ນຕອນການປ່ອຍຕົວນັກໂທດແບບມີເງື່ອນໄຂທັງໝົດ, ມີສິດເຂົ້າຮ່ວມໃນການຂັ້ນຕອນປ່ອຍຕົວ ນັກໂທດແບບມີເງື່ອນໄຂ, ມີສິດໃຫ້ຂໍ້ມູນແກ່ໜ່ວຍງານທີ່ດູແລເລື້ອງການປ່ອຍຕົວນັກໂທດແບບມີເງື່ອນໄຂ ເພື່ອໃຫ້ພິຈາລະນາ ກ່ອນທີ່ຈະມີການປ່ອຍຕົວຜູ້ກະທຳຜິດ, ແລະມີສິດໄດ້ຮັບແຈ້ງ, ເມື່ອຮ້ອງຂໍ, ກ່ຽວກັບການປ່ອຍຕົວແບບມີເງື່ອນໄຂ ຫຼື ການປ່ອຍຕົວຜູ້ກະທຳຜິດໃນກໍລະນີອື່ນໆ.

16. **ຄວາມປອດພັຍຂອງເຫຍື່ອ ແລະສາທາລະນະ ແມ່ນປັດໃຈໃນການປ່ອຍຕົວນັກໂທດແບບມີເງື່ອນໄຂ —** ມີສິດຂໍໃຫ້ມີການ ພິຈາລະນາເຖິງຄວາມປອດພັຍຂອງເຫຍື່ອ, ຄອບຄົວຂອງເຫຍື່ອ, ແລະສາທາລະນະຊົນທົ່ວໄປກ່ອນທີ່ຈະມີການປ່ອຍຕົວນັກໂທດ ແບບມີເງື່ອນໄຂໃດໆ ຫຼື ມີການຕັດສິນປ່ອຍຕົວຫຼັງການພິພາກສາຄະດີ.

17. **ຂໍ້ມູນກ່ຽວກັບສິດທິ 16 ຂໍ້ເຫຼົ່ານີ້ —** ເພື່ອໃຫ້ຮູ້ກ່ຽວກັບສິດທິຕ່າງໆ ທີ່ລະບຸໄວ້ໃນຫຍໍ້ໜ້າ (1) ຫາ (16).

***************************************************

ແຫຼ່ງຂໍ້ມູນຊ່ວຍເຫຼືອເພີ່ມເຕີມ

*ໄອຍະການສູງສຸດບໍ່ຮັບປະກັນ, ມີຄວາມຮັບຜິດຊອບໃດໆ ສຳລັບ, ຫຼື ດຳເນີນການຄວບຄຸມຕໍ່ຄວາມຄິດເຫັນ, ການບໍລິການ, ແລະ ຂໍ້ມູນຕ່າງໆ ຂອງໜ່ວຍງານ ແລະອົງການເຫຼົ່ານີ້.*

**Victim Compensation Board (ຄະນະກຳມະການດູແລການທົດແທນແກ່ເຫຍື່ອຜູ້ຮັບເຄາະ) —** ສາມາດຊ່ວຍເຫຼືອຜູ້ຮັບເຄາະຮ້າຍ ສຳລັບຄ່າໃຊ້ຈ່າຍໃນດ້ານ: ການປຶກສາດ້ານສຸຂະພາບຈິດ, ຄ່າງານສົບ, ການສູນເສັຽລາຍໄດ້, ຄ່າທຳຄວາມສະອາດບ່ອນເກີດເຫດອາຊະຍາກັມ, ຄ່າຍ້າຍສະຖານທີ່, ຄ່າປິ່ນປົວທົ່ວໄປແລະຄ່າປິ່ນປົວແຂ້ວ. **1-800-777-9229** *www.victims.ca.gov*

**CA Dept. of Corrections and Rehabilitation (ພະແນກແກ້ໄຂຄວາມປະພຶດແລະການຟື້ນຟູແຫ່ງຣັຖຄາລິຟໍເນັຽ), Office of Victim & Survivor Rights & Services (OVSRS) (ຫ້ອງການດູແລສິດທິແລະບໍລິການສຳລັບເຫຍື່ອແລະຜູ້ລອດຊີວິດ) —** ໃຫ້ຂໍ້ມູນກ່ຽວກັບການປ່ອຍຕົວຜູ້ກະທຳຜິດ, ການທົດແທນຄືນ, ການປ່ອຍຕົວແບບ ມີເງື່ອນໄຂ ແລະການພິຈາລະນາຄະດີເພື່ອປ່ອຍຕົວແບບມີເງື່ອນໄຂເມື່ອຜູ້ກະທຳຜິດຖືກກັກຂັງໃນຄຸກ. **1-877-256-6877** *www.cdcr.ca.gov/victim_services*

**McGeorge School of Law (ໂຮງຮຽນກົດໝາຍແມັກຈ້ອດ) —** Victims of Crime Resource Center (ສູນແຫຼ່ງຂໍ້ມູນຊ່ວຍເຫຼືອເຫຍື່ອອາດຊະຍາກັມ) — ໃຫ້ຂໍ້ມູນແຫຼ່ງຊ່ວຍເຫຼືອສຳລັບຜູ້ຮັບເຄາະຮ້າຍໂດຍແຍກຕາມເຂດພື້ນທີ່ ພ້ອມທັງໃຫ້ຂໍ້ມູນກ່ຽວກັບສິດທິຂອງຜູ້ຮັບເຄາະຮ້າຍ. **1-800-Victims (1-800-842-8467)** *www.1800victims.org*

**National Domestic Violence Hotline (ສາຍໂທຣດ່ວນບັນຫາຄວາມຮຸນແຮງໃນຄອບຄົວແຫ່ງຊາດ) — 1-800-799-7233** *www.thehotline.org*

**ຂໍ້ມູນຕິດຕໍ່ຄາວຕີ້ສຳລັບບໍລິການດ້ານການປົກປ້ອງຜູ້ໃຫຍ່ —** (ການຂົ່ມເຫັງສູງອາຍຸ) ໝາຍເລກໂທຣດ່ວນ 24 ຊົ່ວໂມງສຳລັບແຕ່ລະຄາວຕີ້ໃນຣັຖຄາລິຟໍເນັຽ. *www.cdss.ca.gov/inforesources/County-APS-Offices*

**National Child Abuse Hotline (ສາຍໂທຣດ່ວນບັນຫາການຂົ່ມເຫັງເດັກແຫ່ງຊາດ) —** ການບຳບັດຮັກສາ ແລະການປ້ອງກັນການຂົ່ມເຫັງເດັກ. **1-800-422-4453** *www.childhelp.org*

**Rape, Abuse & Incest National Network (ສາຍໂທຣດ່ວນເຄືອຂ່າຍຊ່ວຍເຫຼືອບັນຫາການຂົ່ມຂືນ, ການຂົ່ມເຫັງ ແລະການຮ່ວມເພດທີ່ຜິດສິນທຳ) — 1-800-656-4673** *www.rainn.org*

**National Human Trafficking Resource Center Hotline (ສາຍໂທຣດ່ວນສູນຊ່ວຍເຫຼືອບັນຫາການຄ້າມະນຸດແຫ່ງຊາດ) —** ສາຍໂທຣດ່ວນຕະຫຼອດ 24 ຊົ່ວໂມງ **1-888-373-7888** *www.humantraffickinghotline.org*

**The California Relay Service** (ການບໍລິການຣີເລບອກຕໍ່ໃນຄາລິຟໍເນັຽ): **ສຳລັບຜູ້ພິການດ້ານການປາກເວົ້າ, ຫູໜວກ ຫຼື ບໍ່ຄ່ອຍໄດ້ຍິນ: ໂທຣ 711. TTY/HCO/VCO ສຳລັບສຽງພາສາອັງກິດ: 1-800-735-2929 ແລະສຳລັບພາສາສະເປນ: 1-800-855-3000. ບັນທຶກສຽງໃນ TTY/VCO/HCO ເປັນພາສາອັງກິດ: 1-800-735-2922 ແລະສຳລັບພາສາສະເປນ: 1-800-855-3000. ການເວົ້າແບບຄຳຕໍ່ຄຳ – ພາສາອັງກິດ ແລະສະປນ: 1-800-854-7784.**

**ພະແນກບໍລິການຜູ້ຮັບເຄາະຮ້າຍຂອງໄອຍະການສູງສຸດ —** ໃຫ້ຂໍ້ມູນແກ່ເຫຍື່ອ/ພະຍານໃນທ້ອງຖິ່ນ, ຂໍ້ມູນຊ່ວຍເຫຼືອຕາມ ພູມີພາກ ແລະສະຖານະການອຸທອນແກ່ເຫຍື່ອອາດຊະຍາກັມ. ສຳລັບຂໍ້ມູນເພີ່ມເຕີມ, ໂທຣ **1-877-433-9069** ຫຼືເບິ່ງທີ່ເວັບໄຊ: *www.oag.ca.gov/victimservices* ສຳລັບຂໍ້ມູນກ່ຽວກັບການຄ້າມະນຸດໃນທ້ອງຖິ່ນ, ເບິ່ງທີ່ເວັບໄຊ: *www.oag.ca.gov/human-trafficking*

***************************************************

*ຄຳວ່າ 'ຜູ້ຮັບເຄາະຮ້າຍ' ຖືກນິຍາມພາຍໃຕ້ຣັຖະທຳມະນູນແຫ່ງຣັຖຄາລິຟໍເນັຽວ່າຄື "ບຸກຄົນໜຶ່ງຜູ້ທີ່ທົນທຸກທໍລະມານໂດຍກົງ ຫຼື ຖືກກະທຳອັນຕະລາຍທາງຮ່າງກາຍ, ຈິດໃຈ, ຫຼື ທາງການເງິນອັນເປັນຜົນຂອງການກະທຳ ຫຼື ຄວາມພະຍາຍາມທີ່ຈະກະທຳ ອາດຊະຍາກັມ ຫຼື ຄວາມຜິດອາຍາ. ຄຳວ່າ 'ຜູ້ຮັບເຄາະຮ້າຍ' ຍັງລວມເຖິງ ຄູ່ສົມລົດຂອງບຸກຄົນ, ພໍ່ແມ່, ເດັກ, ພີ່ນ້ອງ, ຫຼື ຜູ້ດູແລ, ແລະລວມເຖິງຕົວແທນທີ່ຖືກກົດໝາຍຂອງເຫຍື່ອອາດຊະຍາກັມຜູ້ທີ່ເສັຽຊີວິດ, ຂາດສະມັຖພາບເລັກນ້ອຍ, ຫຼື ທາງຮ່າງກາຍ ຫຼື ຈິດໃຈ. ຄຳວ່າ 'ຜູ້ຮັບເຄາະຮ້າຍ' ບໍ່ໄດ້ລວມເຖິງ ບຸກຄົນທີ່ຢູ່ໃນການຄວບຄຸມດູແລສຳລັບການກະທຳຜິດ, ຜູ້ຖືກກ່າວຫາ, ຫຼື ບຸກຄົນຜູ້ທີ່ສານພົບວ່າ ຈະບໍ່ເປັນປະໂຫຍດຕໍ່ເຫຍື່ອທີ່ເປັນເດັກທີ່ຍັງບໍ່ກະສຽນເປັນຜູ້ໃຫຍ່."*
*(ຣັດຖະທຳມະນູນແຫທ່ງຣັຖຄາລິຟຊເນັຽ I, § 28(e).)*

*ຜູ້ຮັບເຄາະຮ້າຍ, ທະນາຍທີ່ເຫຍື່ອວ່າຈ້າງ, ຕົວແທນທາງກົດໝາຍຂອງຜູ້ຮັບເຄາະຮ້າຍ, ຫຼື ທະນາຍຄວາມຝ່າຍໂຈດຕາມການຮ້ອງຂໍຂອງເຫຍື່ອ, ອາດບັງຄັບໃຊ້ສິດທິຂ້າງເທິງນີ້ໃນການດຳເນີນຄະດີໃດໆ ຫຼື ໃນສານອຸທອນໃນເຂດອຳນາດຂອງສານຕໍ່ຄະດີເນື່ອງຈາກເປັນການໃຊ້ສິດ. ສານຄວນຈະດຳເນີນການຢ່າງທັນທີຕໍ່ຄຳຮ້ອງຂໍດັ່ງກ່າວ.*
*(ຣັດຖະທຳມະນູນແຫທ່ງຣັຖຄາລິຟຊເນັຽ I, § 28(c)(1).)*

Funding is made possible through the United States Department of Justice, Victims of Crime Act, 2016-VA-GX-0057

**VSU Rev 10/2017**